# ຊະນິດແນວພັນປາທີ່ລ້ຽງ



## ປານິນ

ປານິນ (Tilapia) ເປັນປາທີ່ສາມາດກິນອາຫານໄດ້ພືດທຸກຊະນິດບາງເທື່ອກໍ່ກິນຜັກ, ກິນຫຍ້າ ແລະ ກິນດີທີ່ສຸດຄືໄຄນໍ້າຈຶ່ງຈະເລີນເຕີບໃຫຍ່ໄວໃນນໍ້າຂຽວ, ເປັນປາທີ່ລ້ຽງງ່າຍ ແລະ ທົນທານ. ແຕ່ມີຂໍ້ເສຍຄື ອອກລູກຖີ່ ແລະ ຈະເຮັດໃຫ້ປາບໍ່ໃຫຍ່ເທົ່າທີ່ຄວນ ເພາະຈະມີອັດຕາຄວາມໜາແໜ້ນຂອງປາໃນໜອງຫຼາຍເກີນໄປ.



## ປາເກັດແລບ

ປາເກັດແລບ (Silver Carp) ເປັນປາທີ່ລ້ຽງງ່າຍ, ຈະເລີນເຕີບໃຫຍ່ໄວ ແລະ ເປັນປາທີ່ມັກກິນພືດຢູ່ໜ້ານໍ້າ ແລະ ສັດນໍ້າຂະໜາດນ້ອຍທີ່ຢູ່ໃນໜອງ.



## ປາປາກ

ປາປາກ (Silver barb) ເປັນປາທີ່ສາມາດກິນພືດຜັກຫຼາຍຊະນິດເປັນອາຫານ ໂດຍສະເພາະ ຜັກບົ້ງ, ປາຊະນິດນີ້ຈະຢູ່ຮວມກັນເປັນໝູ່, ມັກຢູ່ໃນແຫຼ່ງນໍ້າສະອາດ ໂດຍສະເພາະແມ່ນບ່ອນນໍ້າໄຫຼ, ເປັນປາທີ່ລ້ຽງງ່າຍ ແລະ ຈະເລີນເຕີບໃຫຍ່ໄວ



## ປາຫົວໃຫຍ່

ປາຫົວໃຫຍ່ (Bighead Carp) ເປັນປາທີ່ລ້ຽງງ່າຍ, ຈະເລີນເຕີບໃຫຍ່ໄວ, ເປັນປາທີ່ກິນອາຫານຄ້າຍຄືກັບປາເກັດແລບ (ພືດນໍ້າ ແລະ ສັດນໍ້າຂະໜາດນ້ອຍທີ່ຢູ່ໃນໜອງ) ແລະ ຫາກິນຢູ່ລະດັບນໍ້າຕໍ່າກວ່າປາເກັດແລບ.



## ປາມະຣິການ

ປາມະລິການ (Mrigal)ເປັນປາທີ່ມັກຫາອາຫານກິນ ຕັ້ງແຕ່ກາງຈົນຮອດພື້ນໜອງ, ມັກກິນເສດພືດທີ່ເນົ່າເປື່ອຍສາມາດກິນຮໍາ, ເຂົ້າປາຍຕົ້ມ ແລະ ເສດອາຫານທີ່ເຫຼືອຈາກປາທີ່ກິນລະດັບໜ້ານໍ້າ ແລະ ຍັງເປັນການຊ່ວຍທໍາຄວາມສະອາດພື້ນໜອງ.



## ປາໂຣຮູ

ປາໂຣຮູ (Rohu) ເປັນປາທີ່ສາມາດຈະເລີນເຕີບໃຫຍ່ໄດ້ດີໃນໜອງ ຫຼື ອ່າງເກັບນໍ້າ, ເປັນປາທີ່ມັກກິນພືດ ແລະ ເສດອາຫານທີ່ເນົ່າເປື່ອຍທີ່ມີຢູ່ໃນໜອງ, ປາຊະນິດນີ້ຈະກິນຕັ້ງແຕ່ໜ້ານໍ້າຈົນຮອດພື້ນໜອງ.



## ປາໄນ

ປາໄນ (Common Carp)ເປັນປາກິນພືດ, ເປັນປາທີ່ໝັກຊຸດຄຸ້ຍອາຫານກິນຕາມພື້ນໜອງ, ມັກກິນອາຫານທີ່ກໍາລັງເລີ່ມເນົ່າຄວນລ້ຽງໄວ້ຈໍານວນໜຶ່ງເພາະມັນຈະຊ່ວຍທໍາຄວາມສະອາດພື້ນໜອງ, ແຕ່ຖ້າລ້ຽງໃນອັດຕາໜາແໜ້ນເກີນໄປ ມັນຈະຊຸດຄຸ້ຍ ແລະ ເຮັດໃຫ້ຄັນຄູໜອງອາດເຈື່ອນໄດ້ງ່າຍ ແລະ ຈະເຮັດໃຫ້ປາຊະນິດອື່ນທີ່ລ້ຽງຮ່ວມກັນໃຫຍ່ຊ້າ.



## ປາດຸກ

ປາດຸກ (Catfish) ເປັນປາທີ່ລ້ຽງງ່າຍ, ຈະເລີນເຕີບໃຫຍ່ໄວ, ທົນທານຕໍ່ສະພາບແວດລ້ອມໄດ້ດີ ແລະ ສາມາດລ້ຽງໄດ້ໃນອັດຕາໜາແໜ້ນ, ປາດຸກເປັນປາທີ່ກິນປະເພດຊີ້ນເປັນອາຫານ, ຈໍາພວກແມງໄມ້, ສັດນໍ້າຂະໜາດ, ກຸ້ງ, ລູກປາ ແລະ ອື່ນໆ.


NTPC
Powering the Future
ບໍລິສັດໄຟຟ້ານໍ້າເທີນ 2 ຈໍາກັດ
ພະແນກສິ່ງແວດລ້ອມ ແລະສັງຄົມ
ໂຄງການລຸ່ມເຂື່ອນ ແລະ ເຮືອນຈັກ, ໜ່ວຍງານການປະມົງ



ມີນາ 2013